ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ໂຄງການເຜີຍແຜ່ສະຖຽນລະພາບ
ເລກທີ ...
ວັນທີ 14 FEB 2011

ເລກທີ 096/ປກສ
ນະຄອນຫຼວງວຽງຈັນ, ວັນທີ 31.1.2011

# ຄຳສັ່ງແນະນຳ
## ຂອງລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ

ເຖິງ: ກົມໃຫຍ່ສັນຕິບານ, ກົມໃຫຍ່ຕຳຫຼວດ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ-ເມືອງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ໃຫ້ຢຸດເຊົາການຕັ້ງດ່ານກວດກາຕ່າງໆ ຢູ່ຕາມເສັ້ນທາງພາຍໃນປະເທດ ແລະ ການປັບປຸງການຄຸ້ມຄອງຄົນເຂົ້າ-ອອກເມືອງ ແລະ ຄຸ້ມຄອງຄົນຕ່າງປະເທດ.

- ອີງໃສ່ມະຕິກອງປະຊຸມລັດຖະບານຕັ້ງວັນທີ 24-25/1/2011 ທີ່ຜ່ານມານີ້.

★ ເພື່ອປະຕິບັດມະຕິກອງປະຊຸມດັ່ງກ່າວ ໃຫ້ກາຍເປັນການຈັດຕັ້ງປະຕິບັດຢ່າງຖືກຕ້ອງເປັນຮູບປະທຳ.

ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບແນະນຳດັ່ງນີ້:

❶ ທຸກກົມກອງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ-ເມືອງ ຢຸດເຊົາການຕັ້ງປ້ອມ ຕັ້ງດ່ານກວດກາ ປົກກະຕິ ຕາມເສັ້ນທາງຢູ່ພາຍໃນປະເທດຢ່າງຂາດຕົວ, ເພາະເຫັນວ່າເປັນການຂັດຂວາງການສັນຈອນຂອງປະຊາຊົນ, ການຈໍລະຈອນສິນຄ້າບໍ່ລື່ນລ່ຽນ ຍິ່ງໄປກວ່ານັ້ນກໍ່ເກີດມີປະກົດການຫຍໍ້ທໍ້ຕ່າງໆ ຕໍ່ກັບກຳລັງປ້ອງກັນຄວາມສະຫງົບ ທີ່ໄປເຮັດໜ້າທີ່ຕື່ມອີກ.

❷ ການກວດກາດ້ານວິຊາສະເພາະ ເພື່ອສະກັດກັ້ນ, ຕ້ານສິ່ງທີ່ຜິດກົດໝາຍຕ່າງໆນັ້ນ ໃຫ້ດຳເນີນຕາມປົກກະຕິ, ໃນນັ້ນໃຫ້ກວດກາເປັນສະເພາະ ຕາມເປົ້າໝາຍວິຊາສະເພາະໃດໜຶ່ງທີ່ກຳໄດ້ຊຶ່ງມີແຫຼ່ງຂ່າວທີ່ໜ້າເຊື່ອຖື ແລະ ກວດກາຢູ່ສະຖານໃດກໍ່ໄດ້ຕາມຄວາມເໝາະສົມ ແລະ ດຳເນີນການກວດກາຢ່າງມີການຈັດຕັ້ງ.

\+ ສຳລັບການກວດລົດຕາມຕົວເມືອງໃຫ້ກວດຢູ່ຕາມປ້ອມຈະລາຈອນທີ່ກະຊວງ-ແຂວງໄດ້ກຳນົດ, ຫ້າມກວດກາຈຸດຕ່າງໆ ຕາມໃຈຄືຜ່ານມາ.

❸ ສຳລັບການຄຸ້ມຄອງຄົນຕ່າງປະເທດ ທີ່ລັກປະກອບອາຊີບ, ລັກແຕ່ງງານ ແລະ ອື່ນໆ ໃຫ້ສືບຕໍ່ດຳເນີນປົກກະຕິ ໂດຍຫັນວຽກດັ່ງກ່າວໄປສູ່ລະບຽບກົດໝາຍຢ່າງເຂັ້ມງວດ,

ມອບໃຫ້ຄະນະຮັບຜິດຊອບຄຸ້ມຄອງຄົນຕ່າງປະເທດ ຂັ້ນກະຊວງ, ຂັ້ນແຂວງ-ຂັ້ນເມືອງ ສືບຕໍ່ຊີ້ນໍາຈັດຕັ້ງປະຕິບັດຢ່າງສົມເຫດສົມຜົນ, ຮັບປະກັນບໍ່ໃຫ້ເກີດເລື່ອງອຶກກະທຶກໃຫຍ່ໂຕຕ່າງໆທີ່ບໍ່ດີ; ການຈັດຕັ້ງປະຕິບັດຕ້ອງເລີ່ມຈາກການສຶກສາອົບຮົມ, ການເຮັດໜ້າທີ່ປົດປັນທຶກສັນຍາໃຫ້ຮັດກຸມ, ປັບໃໝ ແລະ ດຳເນີນຄະດີຕາມຄວາມເປັນຈິງຢ່າງເໝາະສົມ, ສຳລັບຄົນຕ່າງປະເທດທີ່ລັກເຂົ້າເມືອງຜິດກົດໝາຍ ຕ້ອງດຳເນີນຕາມລັດຖະບັນຍັດຂອງປະທານປະເທດ, ແລ້ວສົ່ງຄືນປະເທດເດີມຢ່າງເຂັ້ມງວດ.

໔ ເພີ່ມທະວີການຄຸ້ມຄອງຄົນເຂົ້າ-ອອກເມືອງ ໃຫ້ຮັດກຸມ ແລະ ສະດວກວ່ອງໄວ, ຕ້ອງເດັດຂາດຕໍ່ຜູ້ທີ່ບໍ່ເພິ່ງປາດຖະໜາທີ່ ເຂົ້າ-ອອກ ສປປລາວ ແບບຊຸະຊາຍ, ໂດຍປະສານສົມທົບກັບແຕ່ລະເຫຼົ່າຮົບວິຊາສະເພາະຕ່າງໆເປັນຢ່າງດີ. ປັບປຸງການຈັດຕັ້ງນຳພາ-ບັນຊາລະບຽບວິໄນຢູ່ແຕ່ລະດ່ານເຂົ້າ- ອອກເມືອງໃຫ້ມີຄວາມເຂັ້ມແຂງຮັດກຸມ.

໕ ໃຫ້ເອົາໃຈໃສ່ຄຸ້ມຄອງກວດກາພະນັກງານ-ນັກຮົບທີ່ປະຕິບັດໜ້າທີ່ ຢູ່ດ່ານເຂົ້າ-ອອກເມືອງ ແລະ ກວດກາຕາມເປົ້າໝາຍສະເພາະໃຫ້ຮັດກຸມ, ເດັດຂາດບໍ່ໃຫ້ພະນັກງານ-ນັກຮົບທີ່ປະຕິບັດໜ້າທີ່ນັ້ນສວຍໂອກາດ ຖ້າມີກໍ່ຕ້ອງແກ້ໄຂຢ່າງທັນການ.

\+ ມອບໃຫ້ລະບາຍຫົວໜ້າກົມໃຫຍ່, ຫົວໜ້າກົມ, ຫົວໜ້າກອງບັນຊາການອ້ອມຂ້າງກະຊວງ; ຫົວໜ້າກອງບັນຊາການ ປກສ ແຂວງ-ເມືອງ ຈັດຕັ້ງນຳພາພະນັກງານ-ນັກຮົບຄົ້ນຄວ້າເຊື່ອມຊຶມໃຫ້ເລິກເຊິ່ງ, ປັບປຸງແກ້ໄຂ ເຮັດໃຫ້ຖືກທິດຊີ້ນຳຢູ່ຂ້າງເທິງນີ້ເປັນຢ່າງດີ.

ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ

ດຣ. ທອງບັນ ແສງອາພອນ